













# ສະເຫຼີມສະຫຼອງ

# ວັນເອີຣົບ

## 9 ພຶດສະພາ





@EUinLaos

# ວັນເອີຣົບ
# 9 ພຶດສະພາ

**ວັນທີ 9 ພຶດສະພາ, ສະຫະພາບ ເອີຣົບ ສະເຫຼີມສະຫຼອງການເດີນທາງຈາກທະວີບທີ່ມີຄວາມຂັດແຍ່ງ ສູ່ການເປັນສະຫະພາບທີ່ສ້າງຂຶ້ນບົນພື້ນຖານແຫ່ງສັນຕິພາບ, ຄວາມສາມັກຄີ ແລະ ຄວາມກ້າວໜ້າຮ່ວມກັນ. ວັນເອີຣົບ ເປັນສິ່ງເຕືອນໃຈໃຫ້ເຫັນວ່າ ການຮ່ວມມືລະຫວ່າງປະເທດສາມາດສ້າງອະນາຄົດທີ່ໝັ້ນຄົງ ແລະ ສ້າງຄວາມຈະເລີນຮຸ່ງເຮືອງຍິ່ງຂຶ້ນໃຫ້ແກ່ທຸກຄົນ.**



## ວັນເອີຣົບ ແມ່ນຫຍັງ?

ວັນທີ 9 ພຶດສະພາ ຂອງທຸກໆປີ, ສະຫະພາບ ເອີຣົບ ໄດ້ສະເຫຼີມສະຫຼອງ ວັນເອີຣົບ. ວັນນີ້ ຖືເປັນວັນແຫ່ງສັນຕິພາບ ແລະ ຄວາມເປັນເອກະພາບໃນເອີຣົບ ເຊິ່ງຖືເປັນໂອກາດໃນການທົບທວນຄືນເຖິງເສັ້ນທາງຂອງບັນດາປະເທດ ທີ່ເຄີຍມີຄວາມຂັດແຍ່ງກັນໃນອະດີດ ໄດ້ຫັນມາເລືອກເອົາການຮ່ວມມື, ການເປັນຄູ່ຮ່ວມງານ ແລະ ສ້າງຄວາມກ້າວໜ້າຮ່ວມກັນ.

ວັນເອີຣົບ ແມ່ນຈັດຂຶ້ນເພື່ອລະນຶກເຖິງຖະແຫຼງການ Schuman ອັນເປັນປະຫວັດສາດ ໃນວັນທີ 9 ພຶດສະພາ 1950. ໃນວັນດັ່ງກ່າວ, ທ່ານ Robert Schuman, ລັດຖະມົນຕີຕ່າງປະເທດຂອງຝຣັ່ງ ໄດ້ສະເໜີຮູບແບບໃໝ່ຂອງການຮ່ວມມືທາງດ້ານການເມືອງໃນເອີຣົບ. ແນວຄວາມຄິດຂອງເພິ່ນ ແມ່ນລຽບງ່າຍແຕ່ຊົງພະລັງຄື: ລວບລວມເອົາບັນດາປະເທດໃນເອີຣົບຮ່ວມມືກັນໃນອຸດສາຫະກຳຫຼັກ ໂດຍສະເພາະຖ່ານຫີນ ແລະ ເຫຼັກກ້າ ເຊິ່ງຈະມີໂອກາດໜ້ອຍລົງໃນການເຮັດສົງຄາມຕໍ່ກັນ. ຂໍ້ສະເໜີນີ້ໄດ້ນຳໄປສູ່ການສ້າງຕັ້ງປະຊາຄົມເອີຣົບແຫ່ງທຳອິດ ໂດຍການລວມຕົວຂອງ 6 ປະເທດ ເພື່ອບໍລິຫານຈັດການອຸດສາຫະກຳເຫຼົ່ານັ້ນຮ່ວມກັນ. ສິ່ງດັ່ງກ່າວໄດ້ກາຍມາເປັນຮາກຖານໃຫ້ແກ່ສະຫະພາບ ເອີຣົບ ໃນປັດຈຸບັນ.

**ວັນເອີຣົບ ໄດ້ຖືກຈັດຂຶ້ນຢ່າງເປັນທາງການນັບຕັ້ງແຕ່ປີ 1985 ເປັນຕົ້ນມາ ເຊິ່ງແມ່ນປີທີ່ບັນດາຜູ້ນຳຂອງສະຫະພາບ ເອີຣົບ ໄດ້ຕົກລົງກຳນົດເອົາວັນທີ 9 ພຶດສະພາ ເປັນສັນຍະລັກແຫ່ງຄວາມເປັນເອກະພາບ ແລະ ການຮ່ວມມືຂອງເອີຣົບ.**

## ປະຫວັດຄວາມເປັນມາໂດຍຫຍໍ້ ຂອງສະຫະພາບ ເອີຣົບ

ສະຫະພາບ ເອີຣົບ ໄດ້ຮັບການສ້າງຕັ້ງຂຶ້ນພາຍຫຼັງສົງຄາມໂລກຄັ້ງທີສອງສິ້ນສຸດລົງ ເຊິ່ງເປັນຊ່ວງເວລາທີ່ບັນດາຜູ້ນຳເອີຣົບພະຍາຍາມຊອກຫາວິທີທາງ ເພື່ອປ້ອງກັນບໍ່ໃຫ້ເກີດຄວາມຂັດແຍ່ງຂຶ້ນຕື່ມອີກ. ໂດຍເລີ່ມຕົ້ນຈາກ 6 ປະເທດ ໃນຊຸມປີ 1950, ສະຫະພາບ ເອີຣົບ ໄດ້ຄ່ອຍໆຂະຫຍາຍຕົວ ແລະ ເພີ່ມທະວີການຮ່ວມມືໃນຫຼາຍຂົງເຂດຢ່າງເລິກເຊິ່ງເຊັ່ນ: ການຄ້າ, ກົດໝາຍ, ສິ່ງແວດລ້ອມ ແລະ ການພັດທະນາ. ເມື່ອເວລາຜ່ານໄປ, ສະຫະພາບ ເອີຣົບ ໄດ້ກາຍມາເປັນໜຶ່ງໃນກຸ່ມເສດຖະກິດທີ່ໃຫຍ່ທີ່ສຸດໃນໂລກ ແລະ ເປັນຄູ່ຮ່ວມງານທີ່ສຳຄັນໃນລະດັບສາກົນ.

ສະຫະພາບ ເອີຣົບ ມີທຸງປະຈຳສະຫະພາບ ເຊິ່ງມີລັກສະນະເປັນຮູບດາວສີຄຳ 12 ດວງ ລຽງກັນເປັນຮູບວົງມົນຢູ່ເທິງພື້ນຫຼັງສີຟ້າ ເຊິ່ງໄດ້ເລີ່ມນຳໃຊ້ໃນປີ 1986. ທຸງດັ່ງກ່າວບໍ່ໄດ້ໝາຍເຖິງຈຳນວນປະເທດສະມາຊິກ, ແຕ່ດາວທັງ 12 ດວງ ເປັນສັນຍະລັກແຫ່ງຄວາມເປັນເອກະພາບ, ຄວາມກົມກຽວ ແລະ ຄວາມສາມັກຄີ. ເລກ 12 ໂດຍທົ່ວໄປຖືເປັນສັນຍະລັກແຫ່ງຄວາມສົມບູນ ແລະ ຄວາມສົມບູນແບບ.ສ່ວນພື້ນຫຼັງສີຟ້າ ແມ່ນສະແດງເຖິງສັນຕິພາບ ແລະ ຄວາມໝັ້ນຄົງ.

ນອກຈາກນັ້ນ, ສະຫະພາບ ເອີຣົບ ຍັງມີເພງຊາດ ທີ່ໄດ້ຖືກຮັບຮອງເອົາໃນປີ 1985. ເພງນີ້ ມີພື້ນຖານມາຈາກ "Ode to Joy" ເຊິ່ງເປັນບົດເພງທີ່ມີຊື່ສຽງຈາກ ຊິມໂຟນີໝາຍເລກເກົ້າ ທີ່ປະພັນໂດຍ Ludwig van Beethoven. ເພງ "Ode to Joy" ໄດ້ຖ່າຍທອດອຸດົມການແຫ່ງເສລີພາບ, ສັນຕິພາບ ແລະ ຄວາມສາມັກຄີລະຫວ່າງປວງຊົນ. ສິ່ງທີ່ສຳຄັນແມ່ນ ສະຫະພາບ ເອີຣົບ ນຳໃຊ້ພຽງແຕ່ທຳນອງເທົ່ານັ້ນ ໂດຍບໍ່ມີເນື້ອຮ້ອງ ເພື່ອໃຫ້ທຸກພາສາ ແລະ ທຸກວັດທະນະທຳໃນເອີຣົບສາມາດເຂົ້າເຖິງ ແລະ ຊື່ນຊົມຮ່ວມກັນໄດ້.

ທັງທຸງ ແລະ ເພງຊາດ ໄດ້ຖືກຄັດເລືອກມາ ເພື່ອສະທ້ອນໃຫ້ເຫັນເຖິງຈຸດປະສົງຫຼັກຂອງສະຫະພາບ ເອີຣົບ ນັ້ນຄືການເຕົ້າໂຮມບັນດາຊາດທີ່ມີຄວາມຫຼາກຫຼາຍ ໃຫ້ເປັນອັນໜຶ່ງອັນດຽວກັນພາຍໃຕ້ຈິດວິນຍານແຫ່ງຄວາມເປັນເອກະພາບ, ສັນຕິພາບ ແລະ ການຮ່ວມມື.

## ສະຫະພາບເອີຣົບໃນປັດຈຸບັນ ແມ່ນຫຍັງ?

ສະຫະພາບ ເອີຣົບ ໃນປັດຈຸບັນ ແມ່ນການຮ່ວມມືກັນຂອງ 27 ປະເທດໃນເອີຣົບ ທີ່ເຮັດວຽກຮ່ວມກັນໃນຂົງເຂດວຽກງານການເມືອງ, ເສດຖະກິດ ແລະ ບັນຫາທາງສັງຄົມ. ເປົ້າໝາຍຕົ້ນຕ ເພື່ອສົ່ງເສີມສັນຕິພາບ, ຄວາມໝັ້ນຄົງ ແລະ ຄວາມຈະເລີນຮຸ່ງເຮືອງໃຫ້ແກ່ບັນດາປະເທດສະມາຊິກ ແລະ ໃນທົ່ວໂລກ.

ສະຫະພາບ ເອີຣົບ ດັ່ງທີ່ພວກເຮົາຮູ້ຈັກກັນໃນທຸກມື້ນີ້ ແມ່ນໄດ້ຖືກສ້າງຕັ້ງຂຶ້ນຢ່າງເປັນທາງການໃນວັນທີ 1 ພະຈິກ 1993, ເມື່ອສົນທິສັນຍາມາດຕຣິກ (Maastricht Treaty) ເລີ່ມມີຜົນບັງຄັບໃຊ້. ເຖິງຢ່າງໃດກໍ່ຕາມ, ຈຸດເລີ່ມຕົ້ນຂອງ ສະຫະພາບ ເອີຣົບ ແມ່ນມີມາແຕ່ດົນນານກວ່ານັ້ນ: ໃນປີ 1951, 6 ປະເທດໄດ້ຮ່ວມກັນສ້າງຕັ້ງປະຊາຄົມຖ່ານຫີນ ແລະ ເຫຼັກກ້າເອີຣົບ ເຊິ່ງເປັນບາດກ້າວທຳອິດໄປສູ່ການລວມຕົວກັນ. ບັນດາປະເທດເຫຼົ່ານີ້ ມັກຈະຖືກເອີ້ນວ່າ "6 ປະເທດກໍ່ຕັ້ງ" ເຊິ່ງປະກອບມີ: ແບນຊິກ, ຝຣັ່ງ, ເຢຍລະມັນ (ໃນເວລານັ້ນແມ່ນ ເຢຍລະມັນຕາເວັນຕົກ), ອິຕາລີ, ລຸກຊຳບວກ, ໂຮນລັງ.

ໃນປີ 1957, ສົນທິສັນຍາແຫ່ງກຸງໂຣມ ໄດ້ສ້າງຕັ້ງປະຊາຄົມເສດຖະກິດເອີຣົບ ເພື່ອຂະຫຍາຍການຮ່ວມມືໄປສູ່ຕະຫຼາດຮ່ວມ. ຕະຫຼອດຫຼາຍທົດສະວັດຕໍ່ມາ, ການຮ່ວມມືດັ່ງກ່າວໄດ້ແໜ້ນແຟ້ນ ແລະ ຂະຫຍາຍຕົວຂຶ້ນເລື້ອຍໆ ຈົນນຳໄປສູ່ການສ້າງຕັ້ງສະຫະພາບ ເອີຣົບ ໃນປີ 1993. ດັ່ງນັ້ນ, ເຖິງແມ່ນວ່າ ສະຫະພາບ ເອີຣົບ ຈະເລີ່ມຕົ້ນຢ່າງເປັນທາງການໃນປີ 1993 ກໍ່ຕາມ ແຕ່ຮາກຖານອັນສຳຄັນ ແມ່ນໄດ້ຖືກສ້າງຂຶ້ນຢ່າງຕໍ່ເນື່ອງມາເປັນເວລາຫຼາຍກວ່າ 40 ປີ ຜ່ານການຮ່ວມມືທີ່ມີຈຸດປະສົງ ເພື່ອຮັບປະກັນສັນຕິພາບ ແລະ ຄວາມຈະເລີນຮຸ່ງເຮືອງຮ່ວມກັນໃນເອີຣົບ.

## ຜົນສຳເລັດທີ່ສຳຄັນຂອງສະຫະພາບ ເອີຣົບ:

- ສັນຕິພາບ ແລະ ຄວາມໝັ້ນຄົງ
- ການເຊື່ອມໂຍງທາງດ້ານເສດຖະກິດ
- ການພັດທະນາ ແລະ ການຮ່ວມມື
- ຄ່ານິຍົມຮ່ວມກັນ
- ການເຄື່ອນຍ້າຍ ແລະ ໂອກາດ

## 27 ປະເທດສະມາຊິກ ຂອງສະຫະພາບ ເອີຣົບ:






## ສະຫະພາບ ເອີຣົບ ເຮັດວຽກຫຍັງຢູ່ ສປປ ລາວ?

ສະຫະພາບ ເອີຣົບ ແມ່ນຄູ່ຮ່ວມງານໄລຍະຍາວຂອງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ໂດຍເຮັດວຽກຮ່ວມກັບ ລັດຖະບານ ແລະ ປະຊາຊົນລາວ ເພື່ອສົ່ງເສີມການພັດທະນາແບບຍືນຍົງ, ການເຕີບໂຕທາງດ້ານເສດຖະກິດ ແລະ ການເຊື່ອມໂຍງ ເຂົ້າກັບພາກພື້ນ. ໃນປີ 2025, ສະຫະພາບ ເອີຣົບ ແລະ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ໄດ້ຮ່ວມກັນສະເຫຼີມ ສະຫຼອງວັນສ້າງຕັ້ງສາຍພົວພັນການທູດ ຄົບຮອບ 50 ປີ.

ສະຫະພາບ ເອີຣົບ ໃຫ້ການສະໜັບສະໜູນ ສປປ ລາວ ໃນການບັນລຸເປົ້າໝາຍການພັດທະນາແຫ່ງຊາດ ແລະ ເປົ້າໝາຍການ ພັດທະນາແບບຍືນຍົງ. ການຮ່ວມມືຂອງສະຫະພາບ ເອີຣົບ ກວມເອົາຫຼາຍຂົງເຂດວຽກງານທີ່ສຳຄັນເຊັ່ນ:







**ການສຶກສາ ແລະ ທັກສະ**

ປັບປຸງຄຸນນະພາບການສຶກສາໃນໂຮງຮຽນ, ການຝຶກ ອົບຮົມວິຊາຊີບ ແລະ ການສ້າງໂອກາດໃຫ້ແກ່ໄວໜຸ່ມ.

**ສາທາລະນະສຸກ ແລະ ໂພຊະນາການ**

ຊຸກຍູ້ສຸຂະພາບແມ່ ແລະ ເດັກ ໃຫ້ດີຂຶ້ນ ພ້ອມທັງສົ່ງເສີມ ຄວາມໝັ້ນຄົງທາງດ້ານສະບຽງອາຫານ.

**ກະສິກຳ ແລະ ການພັດທະນາຊົນນະບົດ**

ສົ່ງເສີມການເຮັດກະສິກຳແບບຍືນຍົງ, ປັບປຸງຊີວິດການ ເປັນຢູ່ ແລະ ຊ່ວຍເຫຼືອຊາວກະສິກອນໃນການປັບຕົວເຂົ້າ ກັບການປ່ຽນແປງສະພາບດິນຟ້າອາກາດ.

**ສິ່ງແວດລ້ອມ ແລະ ການປ່ຽນແປງສະພາບອາກາດ**

ປົກປັກຮັກສາປ່າໄມ້ ແລະ ຄວາມຫຼາກຫຼາຍທາງຊີວະ ນາໆພັນ ພ້ອມທັງສົ່ງເສີມການນຳໃຊ້ພະລັງງານທົດແທນ ແລະ ເສດຖະກິດກາກບອນຕໍ່າ.

**ການເຊື່ອມໂຍງ ແລະ ການຄ້າ**

ການລົງທຶນໃນພື້ນຖານໂຄງລ່າງ ແລະ ສະໜັບສະໜູນ ສປປ ລາວ ໃນການເຊື່ອມໂຍງເຂົ້າກັບຕະຫຼາດພາກພື້ນ ແລະ ສາກົນ.









ດ້ວຍແນວທາງ "ທີມເອີຣົບ", ສະະພາບ ເອີຣົບ ແລະ ບັນດາປະເທດສະມາຊິກ ໄດ້ເຮັດວຽກຮ່ວມກັນ ເພື່ອສ້າງຜົນປະໂຫຍດສູງສຸດ ແລະ ສະໜັບສະໜູນ ສປປ ລາວ ໃນການສ້າງອະນາຄົດທີ່ມີສ່ວນຮ່ວມ, ເປັນມິດຕໍ່ສິ່ງແວດລ້ອມ ແລະ ມີຄວາມເຂັ້ມແຂງຍິ່ງຂຶ້ນ.

ນັບຕັ້ງແຕ່ມີການລົງນາມຂໍ້ຕົກລົງການຮ່ວມມືລະຫວ່າງ ສະຫະພາບ ເອີຣົບ - ສປປ ລາວ ໃນປີ 1997, ການຮ່ວມມືນີ້ໄດ້ຂະຫຍາຍ ຂອບເຂດໄປສູ່ການເຈລະຈາທາງດ້ານການເມືອງ ກ່ຽວກັບການປົກຄອງ, ລັດທີ່ປົກຄອງດ້ວຍກົດໝາຍ, ສິດທິມະນຸດ ແລະ ສິ່ງທ້າ ທາຍລະດັບໂລກເປັນຕົ້ນແມ່ນ ການປ່ຽນແປງຂອງດິນຟ້າອາກາດ.

ປະເທດສະມາຊິກສະຫະພາບ ເອີຣົບ 4 ປະເທດ ທີ່ມີຜູ້ຕາງໜ້າຢູ່ ສປປ ລາວ: ຝຣັ່ງ, ເຢຍລະມັນ, ຮົງກາຣີ ແລະ ລຸກຊຳບວກ.